## ຂໍ້ເທັດຈິງສໍາລັບຜູ້ຮັບ ແລະ ຜູ້ໃຫ້ການດູແລ

## ອະນຸມັດນໍາໃຊ້ສຸກເສີນ (EUA) ຂອງວັກຊີນໂຄວິດ-19 ໄຟ ເຊີ-ໄບໂອເທັກ ໃນການປ້ອງກັນພະຍາດໂຄໂລນາໄວຣັສ 2019 (ໂຄວິດ-19) ຂອງຄົນທີ່ມີອາຍຸ 12 ປີ ຂຶ້ນໄປ

ທ່ານໄດ້ຖືກສະເໜີຢາວັກຊີນ ໂຄວິດ-19 ໄຟເຊີ້-ໄບໂອເທັກ ໃນການປ້ອງກັນພະຍາດ ໂຄໂລນາໄວຣັສ 2019 (ໂຄວິດ-19) ທີ່ເກີດມາຈາກ SARS-CoV-2. ຂໍ້ມູນທີ່ລະບຸໃນ ຂໍ້ເທັດຈິງສະບັບນີ້ ຈະຊ່ວຍໃຫ້ທ່ານເຂົ້າໃຈຄວາມສ່ຽງ ແລະ ປະໂຫຍດຂອງວັກຊີນໂຄວິດ -19 ໄຟເຊີ້-ໄບໂອເທັກ, ທີ່ທ່ານຈະໄດ້ຮັບເນື່ອງຈາກມີການລະບາດຂອງໂຄວິດ-19 ໃນ ປັດຈຸບັນ.

ວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ ແມ່ນວັກຊີນ ແລະ ອາດຈະຊ່ວຍໃນການປ້ອງກັນ ທ່ານຈາກໂຄວິດ-19. ບໍ່ມີອົງການອາຫານ ແລະ ຢາ ແຫ່ງໃດຂອງສະຫະລັດອາເມລິກາ (FDA) ອະນຸມັດໃຊ້ວັກຊີນນີ້ເພື່ອປ້ອງກັນໂຄວິດ-19.

ອ່ານຂໍ້ເທັດຈິງນີ້ ສໍາລັບຂໍ້ມູນກ່ຽວກັບວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ. ຈົ່ງສົນທະນາ ກັບຜູ້ສະໜອງວັກຊີນຖ້າທ່ານມີຄໍາຖາມ. ມັນແມ່ນການເລືອກຂອງທ່ານທີ່ຈະຮັບ ວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ.

ວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ ແມ່ນການສັກຢາຊຸດ 2-ໂດສ໌, ຫ່າງກັນ 3 ອາທິດ, ເຂົ້າໃນກ້າມຊີ້ນ.

ວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ ອາດຈະບໍ່ປ້ອງກັນໝົດທຸກຄົນ.

ຂໍ້ເທັດຈິງນີ້ອາດຈະຍັງບໍ່ທັນໄດ້ແຈ້ງການ. ຂໍ້ເທັດຈິງທີ່ມີໃນປັດຈຸບັນນີ້, ກະລຸນາເຂົ້າເບິ່ງ www.cvdvaccine.com.

### ສິ່ງທີ່ທ່ານຄວນຮູ້ ກ່ອນທີ່ທ່ານຈະຮັບຢາວັກຊີນມີຫຍັງແດ່

### ໂຄວິດ-19 ແມ່ນຫຍັງ?

ພະຍາດໂຄວິດ-19 ແມ່ນເກີດມາຈາກ ໄວຣັສໂຄໂລນາທີ່ເອີ້ນວ່າ SARS-CoV-2. ຊະນິດຂອງໂຄໂຣ ນາໄວຣັສ ໄດ້ຖືກຄົ້ນພົບກ່ອນໜ້ານີ້. ທ່ານສາມາດໄດ້ຮັບໂຄວິດ-19 ຜ່ານທາງການສໍາຜັດກັບຄົນອື່ນ ທີ່ມີ ເຊື້ອໄວຣັສ. ມັນມີອິດທິພົນເຮັດໃຫ້ເປັນພະຍາດ ທາງເດີນຫາຍໃຈທີ່ສົ່ງຜົນກະທົບຕໍ່ອະໄວຍະວະອື່ນໆນໍາ ດ້ວຍ. ຄົນທີ່ເປັນໂຄວິດ-19 ທີ່ໄດ້ຮັບການລາຍງານຈະມີອາການເຈັບປ່ວຍຫຼາຍຮູບແບບ. ອາການອາດ ຈະເກີດຂຶ້ນ 2 ຫາ 14 ວັນ ຫຼັງຈາກທີ່ໄດ້ຮັບໄວຣັສ. ອາການອາດລວມມີ: ເປັນໄຂ້ ຫຼື ໜາວສັ່ນ; ໄອ; ຫາຍໃຈຖີ່; ອ່ອນເພຍ; ເຈັບກ້າມຊີ້ນ ແລະ ຮ່າງກາຍ; ເຈັບຫົວ; ເສຍປະສາດສໍາຜັດ ຂອງລົດຊາດ ແລະ ກິ່ນ; ເຈັບຄໍ; ຕັນດັງ ຫຼື ຂີ້ມູກຍ້ອຍ; ວິນຫົວ ຫຼື ປວດຮາກ; ຖອກທ້ອງ.

### ວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ ແມ່ນຫຍັງ?

ວັກຊີນໂຄວິດ-19 ໄພເຊີ້-ໄບໂອເທັກ ແມ່ນວັກຊີນທີ່ຍັງບໍ່ທັນຖືກຮັບຮອງວ່າຊ່ວຍໃນການ ປ້ອງກັນໂຄວິດ-19. ບໍ່ມີການອະນຸຍາດຈາກອົງການອາຫານ ແລະ ຢາຂອງສະຫະລັດ ອາເມລິກາ FDA-ວ່າເປັນວັກຊີນປ້ອງກັນໂຄວິດ-19.

ອົງການອາຫານ ແລະ ຢາຂອງສະຫະລັດອາເມລິກາ (FDA) ໄດ້ອະນຸຍາດໃຫ້ນຳໃຊ້ ສຸກເສີນວັກຊີນໂຄວິດ-19 ໄພເຊີ້-ໄບໂອເທັກ ໃນການປ້ອງກັນໂຄວິດ-19 ໃນຄົນທີ່ມີອາຍຸ 12 ປີ ຂຶ້ນໄປ ພາຍໃຕ້ການອະນຸມັດໃຫ້ນຳໃຊ້ສຸກເສີນ (EUA).

ສຳລັບຂໍ້ມູນເພີ່ມເຕີມໃນການອະນຸມັດການນຳໃຊ້ສຸກເສີນ (EUA), ເບິ່ງ"**ການອະນຸມັດການ ນຳໃຊ້ສຸກເສີນ (EUA) ແມ່ນຫຍັງ?**" ພາກສຸດທ້າຍຂອງຂໍ້ເທັດຈິງນີ້.

**ທ່ານຄວນຈະໃຫ້ຄຳແນະນຳແນວໃດຕໍ່ຜູ້ທີ່ຈະສັກຢາໃຫ້ແກ່ທ່ານກ່ອນທີ່ທ່ານຈະຮັບຢາ ວັກຊີນໂຄວິດ-19 ໄພເຊີ້-ໄບໂອເທັກ?**

**ບອກຜູ້ທີ່ຈະສັກຢາວັກຊີນກ່ຽວກັບເງື່ອນໄຂທາງການແພດຂອງທ່ານ, ລວມທັງຖ້າທ່ານ:**

- ມີອາການແພ້
- ມີພະຍາດອັກເສບກ້າມຊີ້ນຫົວໃຈ (ການອັກເສບກ້າມຊີ້ນຫົວໃຈ) ຫຼື ເຫຍື່ອຫຸ້ມຫົວໃຈອັກເສບ (ການອັກເສບຂອງເສັ້ນນອກຫົວໃຈ)
- ເປັນໄຂ້
- ມີອາການເລືອດໄຫຼຜິດປົກກະຕິ ຫຼື ເປັນໂຣກເສັ້ນເລືອດຕີບ
- ພວກພູມຕ້ານທານບົກພ່ອງ ຫຼື ມີຢາທີ່ມີຜົນຕໍ່ລະບົບພູມຕ້ານທານຂອງທ່ານ
- ກຳລັງຖືພາ ຫຼື ວາງແຜນທີ່ຈະຖືກພາ
- ກຳລັງໃຫ້ນົມລູກ
- ຈະຕ້ອງໄດ້ຮັບວັກຊີນໂຄວິດ-19 ຊະນິດອື່ນ
- ເຄີຍເປັນລົມຍ້ອນການສັກຢາ

**ຜູ້ໃດທີ່ຄວນຈະຮັບຢາວັກຊີນໂຄວິດ-19 ໄພເຊີ້-ໄບໂອເທັກ?**

ອົງການອາຫານ ແລະ ຢາຂອງສາຫະລັດອາເມລິກາ (FDA) ໄດ້ອະນຸຍາດໃຫ້ນຳໃຊ້ ສຸກເສີນວັກຊີນໂຄວິດ-19 ໄພເຊີ້-ໄບໂອເທັກ ໃນບຸກຄົນທີ່ມີອາຍຸ 12 ປີ ຂຶ້ນໄປ.

**ຜູ້ໃດທີ່ບໍ່<u>ຄວນ</u> ຮັບວັກເຊີນໂຄວິດ-19 ໄພເຊີ້-ໄບໂອ?**

ທ່ານບໍ່ຄວນຮັບວັກຊີນໂຄວິດ-19 ໄພເຊີ້-ໄບໂອເທັກ ຖ້າວ່າທ່ານ:

- ມີອາການແພ້ຮຸນແຮງພາຍຫຼັງທີ່ໄດ້ສັກຢາວັກຊີນເຂັມທີ່ຜ່ານມາ
- ມີອາການແພ້ຮຸນແຮງໃນສ່ວນປະສົມຂອງວັກຊີນຊະນິດນີ້

**ວັກຊີນໂຄວິດ-19 ໄພເຊີ້-ໄບໂອເທັກ ມີສ່ວນປະສົມຫຍັງແດ່?** ວັກຊີນໂຄວິດ-19 ໄພເຊີ້-ໄບໂອເທັກ ລວມມີສ່ວນປະສົມດັ່ງຕໍ່ໄປນີ້: mRNA, ໄຂມັນ ((4-ຮາຍໂດຊີບີ ໂດຣ) azanediyl) bis (hexane-6,1-diyl) bis (2-hexyldecanoate), 2 [(polyethylene glycol)-2000]-N,N-ditetradecylacetamide, 1,2-Distearoyl-sn-glycero-3- phosphocholine, and cholesterol), ໂປຕັດຊຽມໂຄລາຍ, ໂມໂນເບຊິກໂປຕັດຊຽມ ໂພດເຟດ, ໂຊດຽມຄໍລາຍ, ໄດເບຊິກ ໂຊດຽມໂພເຟດ ໄດຮາຍເດດສ໌, ແລະ ຊູໂຄຣສ໌.

**ວັກຊີນໂຄວິດ-19 ໄພເຊີ້-ໄບໂອເທັກ ຈະໃສ່ໃຫ້ທ່ານແນວໃດ?**
ວັກຊີນໂຄວິດ-19 ໄພເຊີ້-ໄບໂອເທັກ ຈະໃສ່ໃຫ້ແກ່ທ່ານໂດຍການສັກເຂົ້າໃນກ້າມຊີ້ນ.

ວັກຊີນໂຄວິດ-19 ໄພເຊີ້-ໄບໂອເທັກ ແມ່ນການສັກຢາວັກຊີນແບບຊຸດ 2 ເຂັມ ຫ່າງກັນ 3 ອາທິດ.

ຖ້າທ່ານໄດ້ສັກວັກຊີນໂຄວິດ-19 ຂອງໄພເຊີ້-ໄບໂອເທັກ ເຂັມທຳອິດ, ຫຼັງຈາກນັ້ນ 3 ອາທິດທ່ານຈະໄດ້ຮັບວັກຊີນຊະນິດດຽວກັນ ເຂັມທີສອງ ເປັນອັນວ່າສຳເລັດຊຸດຢາວັກຊີນ.

**ວັກຊີນໂຄວິດ-19 ຂອງໄພເຊີ້-ໄບໂອເທັກ ໄດ້ມີການນຳໃຊ້ກ່ອນໜ້ານີ້ບໍ່?**
ວັກຊີນໂຄວິດ-19 ຂອງໄພເຊີ້-ໄບໂອເທັກແມ່ນວັກຊີນທີ່ຍັງບໍ່ທັນໄດ້ຮັບການຢັ້ງຢືນ. ໃນທົດລອງທາງ ການແພດ, ປະມານ 23,000 ຄົນທີ່ມີອາຍຸ 12 ປີ ຂຶ້ນໄປໄດ້ຮັບ ວັກຊີນໂຄວິດ-19 ຂອງໄພເຊີ້-ໄບໂອ ເທັກ ຢ່າງໜ້ອຍ 1 ໂດສ໌.

**ວັກຊີນໂຄວິດ-19 ຂອງໄພເຊີ້-ໄບໂອເທັກມີປະໂຫຍດຫຍັງ?**
ໃນການທົດລອງທາງດ້ານການແພດຢ່າງຕໍ່ເນື່ອງ, ວັກຊີນໂຄວິດ-19 ຂອງໄພເຊີ້-ໄບໂອເທັກ ໄດ້ສະແດງໃຫ້ເຫັນໃນການປ້ອງກັນໂຄວິດ-19 ໂດຍການຕິດຕາມສັກ 2 ເຂັມ ຫ່າງ ກັນ 3 ອາທິດ. ໄລຍະຂອງການປ້ອງກັນໂຄວິດ-19 ປັດຈຸບັນຍັງບໍ່ທັນຮູ້ຈັກ.

**ວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ ມີຄວາມສ່ຽງຫຍັງແດ່?**
ມີໂອກາດທີ່ຈະເກີດຂຶ້ນໄດ້ຍາກທີ່ວັກຊີນໂຄວິດ-19 ໄຟເຊີ້-ໄບໂທເທັກຈະມີອາການແພ້ຂັ້ນຮຸນແຮງ. ອາການແພ້ຂັ້ນຮຸນແຮງ ມັກຈະເກີດຂຶ້ນພາຍໃນສອງ-ສາມນາທີຫາໜຶ່ງຊົ່ວໂມງ ພາຍຫຼັງທີ່ສັກຢາວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ. . ສຳລັບເຫດຜົນນີ້, ຜູ້ໃຫ້ບໍລິການສັກຢາແກ່ທ່ານຈະຖາມທ່ານເພື່ອໃຫ້ພັກຢູ່ໃນສະຖານທີ່ທີ່ທ່ານສັກຢາວັກຊີນເພື່ອທີ່ຈະຕິດຕາມທ່ານພາຍຫຼັງທີ່ຮັບການສັກຢາວັກຊີນ. ອາການຂອງປະຕິກິລິຍາຮຸນແຮງລວມມີ:

- ຫາຍໃຈຍາກ
- ໜ້າ ແລະ ຄໍໃຄ່
- ຫົວໃຈເຕັ້ນໄວ
- ເປັນຜື່ນຂຶ້ນທົ່ວຮ່າງກາຍ
- ວິນຫົວ ແລະ ອ່ອນເພຍ

ພະຍາດກ້າມຊີ້ນຫົວໃຈອັກເສບ (ການອັກເສບຂອງກ້າມຊີ້ນຫົວໃຈ) ແລະ ເຫຍື່ອຫຸ້ມຫົວໃຈອັກເສບ (ການອັກເສບຂອງເສັ້ນນອກຫົວໃຈ) ຈະເກີດຂຶ້ນກັບບາງຄົນທີ່ໄດ້ຮັບວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ. ໃນຄົນສ່ວນຫຼາຍ, ອາການຈະເລີ່ມຂຶ້ນພາຍໃນສອງສາມມື້ຫຼັງຈາກທີ່ໄດ້ຮັບຢາວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ ເຂັມທີສອງ. ໂອກາດໃນການເກີດຂຶ້ນແມ່ນຕ່ຳທີ່ສຸດ. ໄປພົບແພດທັນທີຖ້າທ່ານມີອາການໃດໜຶ່ງດັ່ງຕໍ່ໄປນີ້ ຫຼັງຈາກທີ່ໄດ້ຮັບວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ:

- ເຈັບໜ້າເອິກ
- ຫາຍໃຈຖີ່ແລະສັ້ນ
- ມີຄວາມຮູ້ສຶກວ່າຫົວໃຈເຕັ້ນໄວ, ຫົວໃຈສັ່ນ ຫຼື ຫົວໃຈເຕັ້ນແຮງຜິດປົກກະຕິ.

ຜົນຂ້າງຄຽງທີ່ຖືກລາຍງານຂອງວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ ລວມມີ:

- ອາການແພ້ທີ່ຮຸນແຮງ
- ອາການແພ້ທີ່ຮຸນແຮງເຊັ່ນ ຜື່ນ, ຄັນ, ລົມບ້າໝູ, ຫຼື ໜ້າໃຄ່
- ພະຍາດກ້າມເນື້ອອັກເສບ (ການອັກເສບກ້າມຊີ້ນຫົວໃຈ)
- ເຫຍື້ອຫຸ້ມຫົວໃຈອັກເສບ (ການອັກເສບຂອງເສັ້ນນອກຫົວໃຈ)
- ປວດບໍລິເວນທີ່ສັກຢາ
- ເມື່ອຍ
- ເຈັບຫົວ
- ເຈັບກ້າມເນື້ອ
- ໜາວສັ່ນ
- ປວດຕີນໂຕ
- ເປັນໄຂ້
- ໃຄ່ບໍລິເວນທີ່ສັກຢາ
- ເປັນສີແດງບໍລິເວນທີ່ສັກຢາ
- ປວດຮາກ
- ຮູ້ສຶກບໍ່ສະບາຍ
- ຕ່ອມນໍ້າເຫຼືອງໃຄ່ (ຄວາມຜິດປົກກະຕິຂອງຕ່ອມນໍ້າເຫຼືອງ)
- ຖອກທ້ອງ
- ປວກຮາກ
- ເຈັບແຂນ

ຜົນຂ້າງຄຽງຂອງວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກເຫຼົ່ານີ້ອາດຈະບໍ່ເກີດຂຶ້ນທັງໝົດ. ຜົນຂ້າງຄຽງທີ່ຮຸນແຮງ ແລະ ຄາດບໍ່ເຖິງອາດຈະເກີດຂຶ້ນ. ໄຟເຊີ້-ໄບໂອເທັກ ໂຄວິດ-19. ວັກຊີນຍັງສືບຕໍ່ສຶກສາໃນທາງການແພດ.

**ຂ້າພະເຈົ້າຄວນຈະເຮັດແນວໃດກ່ຽວກັບຜົນຂ້າງຄຽງ?**

ຖ້າທ່ານມີປະສົບການຂອງການແພ້ຢາທີ່ຮຸນແຮງ, ໂທຫາ 9-1-1, ຫຼື ໄປໂຮງໝໍທີ່ໃກ້ທີ່ສຸດ.

ໂທຫາຜູ້ທີ່ສັກຢາໃຫ້ແກ່ທ່ານ ຫຼື ຜູ້ສະໜອງການປິ່ນປົວຂອງທ່ານ ຖ້າທ່ານມີຜົນຂ້າງຄຽງທີ່ເກີດຂຶ້ນກັບທ່ານ ຫຼື ບໍ່ເຊົາ.

ລາຍງານຜົນຂ້າງຄຽງຫາ**ອົງການອາຫານ ແລະ ຢາຂອງສະຫະລັດອາເມລິກາ (FD)/CDC ລະບົບການລາຍງານເຫດການທີ່ບໍ່ດີຕໍ່ວັກຊີນ(VAERS)**. ເບີໂທລະສັບຟຣີຂອງ VAERS 1-800-822-7967 ຫຼື ລາຍງານຜ່ານທາງອອນລາຍ ຫາ https://vaers.hhs.gov/reportevent.html. ກະລຸນາ ລະບຸ "ວັກຊີນ ໂຄວິດ-19 ໄຟເຊີ້-ໄບໂອເທັກ EUA" ໃນແຖວທໍາອິດຂອງ ບ່ອກ #18 ຂອງຟອມລາຍງານ.

ນອກຈາກນັ້ນ, ທ່ານສາມາດລາຍງານຜົນຂ້າງຄຽງ ເຖິງບໍລິສັດໄຟເຊີ້. ທີ່ເບີຕິດຕໍ່ສະໜອງຂໍ້ມູນຂ້າງລຸ່ມນີ້.

| ເວັບໄຊທ໌ | ເບີແຟັກ | ເບີໂທລະສັບ |
|---|---|---|
| www.pfizersafetyreporting.com | 1-866-635-8337 | 1-800-438-1985 |

ທ່ານຍັງອາດຈະໄດ້ຮັບທາງເລືອກໃນການລົງທະບຽນໃນ ວີ-ເຊຟ໌ (v-safe). V-safe (ວີ-ເຊຟ໌) ແມ່ນເຄື່ອງມືສະໝັກໃຈທາງໂທລະສັບສະມາດໂຟນໃໝ່ ຊຶ່ງເປັນເຄື່ອງມືໃນການສົ່ງຂໍ້ຄວາມ ແລະ ການສຳຫຼວດທາງເວບໄຊທ໌ ໃນການກວດຜູ້ທີ່ໄດ້ຮັບການສັກຢາວັກຊີນ ເພື່ອລະບຸເຖິງທ່າແຮງໃນການເກີດຜົນກະທົບຂ້າງຄຽງຫຼັງຈາກທີ່ຮັບຢາໂຄວິດ-19. ວີ-ເຊຟ໌ ຖາມຄຳຖາມທີ່ຈະຊ່ວຍ CDC ຕິດຕາມຄວາມປອດໄພຂອງວັກຊີນໂຄວິດ-19. ວີ-ເຊຟ໌ ຍັງແຈ້ງເຕືອນໃຫ້ໄປຮັບຢາເຂັມທີສອງ ຖ້າຕ້ອງການ ແລະ ລາຍງານຕິດຕາມທາງໂທລະສັບຈາກ CDC ຖ້າຜູ້ເຂົ້າຮ່ວມລາຍງານຜົນກະທົບດ້ານສຸຂະພາບທີ່ສຳຄັນ ພາຍຫຼັງທີ່ສັກຢາ ວັກຊີນໂຄວິດ-19. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບວິທີການສະໝັກ, ເຂົ້າເບິ່ງ: www.cdc.gov/vsafe.

**ຖ້າຂ້ອຍຕັດສິນໃຈທີ່ຈະບໍ່ຮັບວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ ຈະເປັນແນວໃດ?** ມັນເປັນທາງເລືອກຂອງທ່ານທີ່ຈະຮັບ ຫຼື ບໍ່ຮັບວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ. ຖ້າທ່ານຕັດສິນໃຈ ທີ່ຈະບໍ່ຮັບມັນ, ມັນຈະບໍ່ມີຫຍັງປ່ຽນແປງໃນການປິ່ນປົວຂັ້ນພື້ນຖານຂອງທ່ານ.

**ມີທາງເລືອກອື່ນບໍ່ທີ່ສາມາດໃຊ້ໄດ້ ສຳລັບການປ້ອງກັນໂຄວິດ-19 ນອກຈາກວັກຊີນໂຄວິດ-19 ຂອງໄຟເຊີ້-ໄບໂອເທັກ?**
ປັດຈຸບັນ, ຍັງບໍ່ມີການຢັ້ງຢືນ ວັກຊີນຫຼາກຫຼາຍຊະນິດທີ່ໃຊ້ໃນການປ້ອງກັນຂອງໂຄວິດ-19. ວັກຊີນ ອື່ນໆທີ່ໃຊ້ໃນການປ້ອງກັນໂຄວິດ-19 ອາດຈະມີພາຍໃຕ້ການອະນຸຍາດໃຫ້ນຳໃຊ້ສຸກເສີນ

**ຂ້າພະເຈົ້າສາມາດໃຊ້ວັກຊີນໂຄວິດ-19 ຂອງໄຟເຊີ້-ໄບໂອເທັກ ຮ່ວມກັບວັກຊີນຂອງຊະນິດອື່ນໆໄດ້ບໍ່?**
ຍັງບໍ່ມີຂໍ້ມູນໃນການນຳໃຊ້ວັກຊີນໂຄວິດ-19 ຂອງໄຟເຊີ້-ໄບໂອເທັກ ຮ່ວມກັບວັກຊີນຊະນິດ ອື່ນໆ.

**ຖ້າຂ້ອຍຖືພາ ຫຼື ຢູ່ໃນໄລຍະການໃຫ້ນົມລູກຢູ່ຈະເປັນແນວໃດ?**
ຖ້າທ່ານຖືພາ ຫຼື ຢູ່ໃນໄລຍະການໃຫ້ນົມລູກ, ປຶກສາທາງເລືອກຂອງທ່ານກັບຜູ້ສະໜອງ ການດູແລສຸຂະພາບຂອງທ່ານ.

**ວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ ຈະສາມາດໃຫ້ຂ້າພະເຈົ້າເປັນໂຄວິດ-19 ໄດ້ບໍ່?**
ບໍ່. ວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ ບໍ່ມີເຊື້ອ SARS-CoV-2 ແລະ ບໍ່ສາມາດ ໃຫ້ທ່ານເປັນໂຄວິດ-19.

**ເກັບຮັກສາບັດສັກຢາຂອງທ່ານ**
ເມື່ອທ່ານໄດ້ຮັບຢາຄັ້ງທຳອິດ, ທ່ານຈະໄດ້ຮັບບັດສັກຢາວັກຊີນ ເພື່ອສະແດງໃຫ້ເຫັນ ເມື່ອທ່ານກັບຄືນໄປສັກເຂັມທີສອງຂອງວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ. ຈື່ໄວ້ວ່າຕ້ອງ ເອົາບັດໄປນຳໃນເວລາໄປສັກຢາ

ເຂັມທີສອງ.

**ຂໍ້ມູນເພີ່ມເຕີມ**
ຖ້າທ່ານມີຄຳຖາມ, ເຂົ້າເບິ່ງທີ່ເວັບໄຊທ໌ ຫຼື ໂທຫາເບີໂທລະສັບຜູ້ສະໜອງຂ້າງລຸ່ມນີ້.

ເຂົ້າເຖິງຂໍ້ເທັດຈິງທີ່ມີໃນປັດຈຸບັນ, ກະລຸນາສະແກນ ຄິວອາໂຄດ (QR code) ທີ່ລະບຸຂ້າງລຸ່ມນີ້.

| ເວັບໄຊທ໌ທົ່ວໂລກ | ເບີໂທລະສັບ |
|---|---|
| www.cvdvaccine.com | 1-877-829-<br>2619 |

**ຂ້ອຍສາມາດຮຽນຮູ້ເພີ່ມເຕີມໄດ້ແນວໃດ?**
- ຖາມຜູ້ສະໜອງການຮັບຢາວັກຊີນ.
- ເຂົ້າເບິ່ງ CDC ທີ່ https://www.cdc.gov/coronavirus/2019-ncov/index.html.
- ເຂົ້າເບິ່ງ ອົງການອາຫານ ແລະ ຢາສະຫະລັດອາເມລິກາ (FDA) ທີ່ https://www.fda.gov/emergency -preparedness- and-r esponse/mcm- legal-regulatory-and-policy-framework/emergency-use-authorization.
- ຕິດຕໍ່ຫາພະແນກສາທາລະນະສຸກທ້ອງຖິ່ນ ຫຼື ລັດຂອງທ່ານ.

**ຂໍ້ມູນການສັກຢາວັກຊີນຂອງຂ້ອຍຈະຖືກບັນທຶກຢູ່ໃສ?**
ຜູ້ສະໜອງການສັກຢາຂອງທ່ານອາດຈະລວມເຖິງຂໍ້ມູນການສັກຢາລະບົບຂໍ້ມູນຂ່າວສານ ກ່ຽວກັບການ ສັກຢາກັນພະຍາດ (IIS) ຫຼື ລະບົບທີ່ກຳນົດອື່ນໆໃນລັດ/ທ້ອງຖິ່ນຂອງທ່ານ. ນີ້ຈະໝັ້ນໃຈວ່າທ່ານ ຈະໄດ້ຮັບວັກຊີນຊະນິດດຽວກັນເມື່ອທ່ານກັບຄືນມາສັກຢາວັກຊີນເປັນ ເຂັມທີສອງ. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ IISs ເຂົ້າເບິ່ງ: https://www.cdc.gov/vaccines/programs/iis/about.html.

**ຂ້ອຍຈະຖືກຮຽກເກັບເງິນຄ່າທຳນຽມການບໍລິການສຳລັບການຮັບຢາວັກຊີນໂຄວິດ-19 ບໍ?**
ບໍ່. ໃນຂະນະນີ້, ຜູ້ໃຫ້ບໍລິການສັກຢາບໍ່ສາມາດເກັບເງິນຄ່າບໍລິການສັກຢາຂອງທ່ານ ແລະ ທ່ານຈະບໍ່ໄດ້ເສຍເງິນຢາທີ່ບໍ່ຢູ່ໃນສະຕ໋ອກ ຫຼື ຄ່າທຳນຽມໃດໆທີ່ກ່ຽວຂ້ອງກັບການສັກຢາວັກຊີນໂຄວິດ-19. ເຖິງຢ່າງໃດກໍ່ຕາມ, ຜູ້ທີ່ສະໜອງຢາວັກຊີນອາດຈະຮຽກເກັບເງິນຄືນຈາກໂຄງການ ຫຼື ແຜນການທີ່ຄຸ້ມຄອງການບໍລິການຄ່າທຳນຽມສຳລັບຜູ້ທີ່ໄດ້ຮັບວັກຊີນໂຄວິດ-19 (ປະກັນໄພສ່ວນຕົວ, ການປິ່ນປົວສຸຂະພາບ, Medicaid, ຊັບພະຍາກອນສຸຂະພາບ & ການບໍລິການ [HRSA] ໂຄວິດ-19 ໂຄງການທີ່ບໍ່ແມ່ນຜູ້ ປະກັນໄພສຳລັບຜູ້ທີ່ໄດ້ຮັບທີ່ບໍ່ມີປະກັນໄພ).

**ຂ້ອຍສາມາດລາຍງານກໍລະນີທີ່ສົງໃສວ່າເປັນການສໍ້ໂກງໄດ້ຢູ່ໃສ?**
ບຸກຄົນທີ່ຮູ້ເຖິງການລະເມີດຂໍ້ກຳນົດຂອງໂຄງການວັກຊີນປ້ອງກັນໂຄວິດ-19 ຂອງ CDC ທີ່ອາດຈະ ເກີດ

ຂຶ້ນຄວນລາຍງານຫາຫ້ອງການສຳນັກງານຜູ້ກວດກາທົ່ວໄປຂອງສະຫັດລັດອາເມລິກາ. ພະແນກ ສຸຂະພາບ ແລະ ການບໍລິການມະນຸດ, ທີ່ 1-800-HHS-TIPS ຫຼື https://TIPS.HHS.GOV.

## ໂຄງການຮ່ວມມືລະຫວ່າງປະເທດມີຫຍັງແດ່?

ໂຄງການຊົດເຊີຍການບາດເຈັບ (CICP) ແມ່ນໂຄງການຂອງລັດຖະບານກາງທີ່ອາດຈະຊ່ວຍຈ່າຍຄ່າປິ່ນປົວ ແລະ ຄ່າໃຊ້ຈ່າຍອື່ນໆຂອງຄົນບາງຄົນ ເຊິ່ງເປັນຜູ່ທີ່ຖືກບາດເຈັບ ຮຸນແຮງຈາກການໃຊ້ຢາ ຫຼື ຮັບວັກຊີນ, ລວມທັງວັກຊີນນີ້. ໂດຍທົ່ວໄປແລ້ວ, ການຂໍຮັບ ເງິນຄືນຕ້ອງໄດ້ຍື່ນໄປຫາ CICP ພາຍໃນ (1) ປີຈາກມື້ທີ່ທ່ານໄດ້ຮັບວັກຊີນ. ເພື່ອຮຽນຮູ້ ເພີ່ມເຕີມກ່ຽວກັບໂຄງການ, ເຂົ້າເບິ່ງwww.hrsa.gov/cicp/ ຫຼື ໂທ 1-855-266-2427.

## ການອະນຸຍາດນຳໃຊ້ສຸກເສີນ (EUA) ແມ່ນຫຍັງ?

ອົງການອາຫານ ແລະ ຢາຂອງສະຫະລັດອາເມລິກາ FDA ໄດ້ໃຫ້ຢາວັກຊີນໂຄວິດ-19 ຂອງໄຟເຊີ້-ໄບໂອເທັກ ພາຍໃຕ້ກົນໄກການເຂົ້າເຖິງສຸກເສີນທີ່ເອີ້ນວ່າ ການອະນຸຍາດ ນຳໃຊ້ສຸກເສີນ (EUA). EUA ແມ່ນການສະໜັບສະໜູນຂອງເລຂາທິການສຸຂະພາບ ແລະ ການບໍລິການມະນຸດ (HHS) ໄດ້ຖະແຫລງວ່າ ສະຖານະການຂອງການລະບາດມີຢູ່ ແລະ ເພື່ອຍັ້ງຢືນການນຳໃຊ້ຢາ ແລະ ຜະລິດຕະພັນຊີວະພາບ ສຸກເສີນ ໃນໄລຍະການຄຸ້ມຄອງ ລະບາດຂອງໂຄວິດ-19.

ວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ ບໍ່ໄດ້ຜ່ານການກວດກາແບບດຽວກັນກັບຜະລິດ ຕະພັນທີ່ໄດ້ຮັບອະນຸຍາດຈາກ ອົງການອາຫານ ແລະ ຢາ ຂອງສະຫະລັດອາເມລິກາ (FDA). ອົງການອາຫານ ແລະ ຢາຂອງສະຫະລັດອາເມລິກາອາ(FDA) ອາດຈະອະນຸ ມັດການນຳໃຊ້ສຸກເສີນ (EUA) ພາຍໃຕ້ເງື່ອນໄຂສະເພາະໃດໜຶ່ງ, ຊຶ່ງປະກອບດ້ວຍ ການບໍ່ມີທາງເລືອກທີ່ພຽງພໍ, ໄດ້ຮັບການອະນຸມັດໃຫ້ເປັນທາງເລືອກ. ນອກຈາກນັ້ນ, ການຕັດສິນໃຈຂອງອົງການອາຫານ ແລະ ຢາ (FDA) ແມ່ນອີງໃສ່ຫຼັກຖານວິທະຍາສາດລວມທັງໝົດທີ່ມີຢູ່ວ່າການຜະລິດອາດຈະມີປະສິດທິຜົນໃນການປ້ອງກັນ ໂຄວິດ-19 ໃນລະຫວ່າງ ໂຄວິດ-19ລະບາດ ເຊິ່ງເປັນທີ່ຮູ້ຈັກ ແລະ ມີແນວໂນ້ມທີ່ມີຜົນປະໂຫຍດ ເປັນທີ່ຮູ້ຈັກ ແລະ ມີຄວາມສ່ຽງຂອງຜະລິດຕະພັນ. ມາດຕະຖານທັງໝົດເຫຼົ່ານີ້ຕ້ອງ ໄດ້ຮັບການຕອບສະໜອງເພື່ອໃຫ້ຜະລິດຕະພັນຖືກນຳໄປໃຊ້ເຂົ້າໃນການປິ່ນປົວຄົນເຈັບໃນໄລຍະການລະບາດຂອງໂຄວິດ-19.

ການອະນຸມັດນຳໃຊ້ເວລາສຸກເສີນ (EUA) ສຳລັບວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ ມີຜົນບັງຄັບໃຊ້ ໃນໄລຍະການລະບາດຂອງໂຄວິດ-19 EUA ພຽງແຕ່ແຈ້ງໃຫ້ການ ອະນຸມັດນຳໃຊ້ຜະລິດຕະພັນເຫຼົ່ານີ້ ໃນເວລາສຸກເສີນ, ຍົກເວັ້ນແຕ່ວ່າຈະຢຸດ ຫຼື ຍົກເລີກ (ຫຼັງຈາກທີ່ຜະລິດຕະພັນດັ່ງກ່າວອາດຈະບໍ່ໃຫ້ນຳໃຊ້ ອີກຕໍ່ໄປ).

ຜະລິດໂດຍ

Pfizer Inc., New York, NY 10017

ຜະລິດຕະພັນສຳລັບ
BioNTech Manufacturing GmbH
An der Goldgrube 12
55131 Mainz, Germany
LAB-1451-4.2a
ປັບປຸງ: 25 ມິຖຸນາ 2021

ສະແກນເພື່ອເກັບກຳຂໍ້ເທັດຈິ່ງທີ່ສະໜອງໃຫ້ຜູ້ຮັບ ວັກຊີນເພື່ອເກັບກຳ
ການປິ່ນປົວທາງເອເລັກໂຕນິກ /ລະບົບຂໍ້ມູນກ່ຽວກັບພູມຕ້ານທານ.

ວັນທີບາໂຄດ: 05/2021